ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0515/ກຄພນ.ພຕສ

ນະຄອນຫລວງວຽງຈັນ, ວັນທີ 17 Jun 2015

ເຖິງ : ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ : ແນະນຳເພີ່ມເຕີມເນື້ອໃນບາງມາດຕາຂອງຂໍ້ຕົກລົງວ່າດ້ວຍ ທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ເລກທີ 1005/ອຄ.ຄພນ, ລົງວັນທີ 22/05/2015 ແລະ ຂັ້ນຕອນການຈັດຕັ້ງປະຕິບັດ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມການຄ້າພາຍໃນ ສະບັບເລກທີ 2250/ອຄ.ຈຕງ, ລົງວັນທີ 23/10/2013.
- ອີງຕາມ ຂໍ້ຕົກລົງວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ເລກທີ 1005/ອຄ.ຄພນ, ລົງວັນທີ 22/05/2015.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍ ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ເລກທີ 1005/ອຄ.ຄພນ, ລົງວັນທີ 22/05/2015 ຖືກຕ້ອງສອດຄ່ອງ ແລະ ມີຄວາມເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ.

ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ເພື່ອແນະນຳເນື້ອໃນບາງມາດຕາຂອງຂໍ້ຕົກລົງວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍເລກທີ ເລກທີ 1005/ອຄ.ຄພນ, ລົງວັນທີ 22/05/2015 ແລະ ຂັ້ນຕອນຈັດຕັ້ງປະຕິບັດໃຫ້ແກ່ວິຊາການຂອງພະແນກ ອຄ ແຂວງ, ຂະແໜງການທີ່ກ່ຽວຂ້ອງກໍ່ຄືຫົວໜ່ວຍທຸລະກິດຮັບຊາບ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງດັ່ງນີ້:

<u>ດ້ານເນື້ອໃນເອກະສານ:</u>

1. ຢູ່ໃນ ມາດຕາ 13 ຂອງຂໍ້ຕົກລົງ ການສ້າງຕັ້ງ ແລະ ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍສຳລັບຜູ້ລົງທຶນຕ່າງປະເທດໃຫ້ເຂົ້າໃຈວ່າ: ສຳລັບທຶນຈົດທະບຽນທີ່ຕ່ຳກວ່າ 4 ຕື້ກີບລົງມາ ແມ່ນສະຫງວນໄວ້ສຳລັບພົນລະເມືອງລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສັນຊາດລາວເທົ່ານັ້ນ.

2. ຢູ່ໃນມາດຕາ 14 ຂໍ້ທີ 1 ຂອງຂໍ້ຕົກລົງ ການຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ໃຫ້ເຂົ້າໃຈວ່າ: ສຳລັບວິສາຫະກິດທີ່ ຜູ້ລົງຕ່າງປະເທດທີ່ມີທຶນຈົດທະບຽນແຕ່ 20 ຕື້ກີບຂຶ້ນໄປນັ້ນ, ສາມາດເປັນເຈົ້າຂອງວິສາຫະກິດ ໄດ້ ຮ້ອຍເປີເຊັນ ແລະ ຍື່ນຄຳຮ້ອງຂໍແຈ້ງຂຶ້ນທະບຽນວິສາຫະກິດ ການຄ້າຂາຍຍົກ ແລະ ຂາຍຍ່ອຍມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຕ້ອງໄດ້ຮັບຄຳເຫັນດີ ຈາກພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທີ່ວິສາຫະກິດນັ້ນ ມີສຳນັກງານໃຫຍ່ຈະຕັ້ງຢູ່.

ວິທີຈັດຕັ້ງປະຕິບັດ:

1. ລາຍງານໃຫ້ອຳນາດການປົກຄອງ ແລະ ຂະແໜງການທີ່ກ່ຽວຂ້ອງພາຍໃນແຂວງ, ນະຄອນຫລວງ ແລະ ເມືອງ ກ່ຽວກັບຂໍ້ຕົກລົງດັ່ງກ່າວ;
2. ເຜີຍແຜ່ໃຫ້ຫົວໜ່ວຍທຸລະກິດ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື;
3. ເກັບກຳບັນຊີຫົວໜ່ວຍທຸລະກິດ ແລະ ການດຳເນີນທຸລະກິດຂອງເຂົາເຈົ້າ;
4. ເຮັດປຶດບັນທຶກຮ່ວມລະຫວ່າງ ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຫົວໜ່ວຍທຸລະກິດ ເພື່ອໃຫ້ເຂົາເຈົ້າ ປັບປຸງຕົນເອງຕາມກຳນົດເວລາ;
5. ລາຍງານໃຫ້ອຳນາດການປົກຄອງ ແລະ ກະຊວງອຸດສາຫະກຳ ແລະ ການຄ້າຊາບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ແນະນຳໃຫ້ວິຊາການປະຕິບັດຕາມນີ້ດ້ວຍ.

ຮັກສາການຫົວໜ້າກົມການຄ້າພາຍໃນ

ບຸນທຽນ ແກ້ວສີພາ